ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 7592 ສສກ

ນະຄອນຫຼວງວຽງຈັນ, ວັນທີ 14 ຕຸລາ 2024

## ຂໍ້ຕົກລົງ

### ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ດິຈິຕອນ ສໍາລັບການສຶກສາ.

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ ລົງວັນທີ 18 ພະຈິກ 2021;
- ອີງຕາມ ການສະເໜີຂອງ ສູນເຕັກໂນໂລຊີ ຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ, ສະບັບເລກທີ 291/ຕຂສ, ລົງວັນທີ 5 ກັນຍາ 2024 ແລະ ການສະເໜີຂອງກົມແຜນສະບັບເລກທີ 5117/ຜກ, ລົງວັນທີ 11 ຕຸລາ 2024

### ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຕົກລົງ:

**ມາດຕາ 01**: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ດິຈິຕອນ ສາລັບການສຶກສາ 2025-2035 ຢ່າງເປັນທາງການ.

**ມາດຕາ 02**: ມອບໃຫ້ ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ເປັນເຈົ້າການ ໃນການປະສານສົມທົບ ກັບບັນດາກົມວິຊາການ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ຂັ້ນເທິງຊາບ ເປັນແຕ່ລະໄລຍະ.

**ມາດຕາ 03**: ມອບໃຫ້ຫ້ອງການກະຊວງ, ບັນດາກົມ, ອົງການທຽບເທົ່າ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ, ສະຖານການສຶກສາ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຍຸດທະສາດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 04**: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ລັດຖະມົນຕີ

ຮສ. ປອ. ພຸດ ສິມມາລາວົງ